ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ　　　　　　　　　　　　　　　　　　　ເລກທີ 11 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 03 ມັງກອນ 2025

# ຂໍ້ຕົກລົງ
# ວ່າດ້ວຍການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023;
- ອີງຕາມ ໜັງສືແຈ້ງທິດຊີ້ນຳຂອງນາຍົກລັດຖະມົນຕີ ສະບັບເລກທີ 2426/ຫສນຍ, ລົງວັນທີ 20 ພະຈິກ 2024;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ເພື່ອໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຖືກຕ້ອງຕາມວັດຖຸປະສົງ ແລະ ເປົ້າໝາຍ ແນໃສ່ຮັກສາສະຖຽນລະພາບທາງດ້ານເງິນຕາ.

**ມາດຕາ 2 ການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ**

ການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ແມ່ນ ການກຳນົດມູນຄ່າ, ຕິດປະກາດ, ໂຄສະນາ, ຊຳລະ ແລະ/ຫຼື ຮັບຊຳລະ ຄ່າສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ ລວມທັງການກຳນົດໂຄງສ້າງລາຄາສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ເປັນເງິນຕາຕ່າງປະເທດ.

**ມາດຕາ 3 ຫຼັກການກ່ຽວກັບການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ**

ການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນການນຳໃຊ້ເງິນຕາຕ່າງປະເທດຢ່າງປະຢັດ, ສອດຄ່ອງກັບກົດໝາຍ, ລວມສູນ, ເປັນເອກະພາບ ແລະ ຮັບປະກັນຖານະການຊຳລະກັບຕ່າງປະເທດ ໃຫ້ມີຄວາມເຂັ້ມແຂງ;

2. ຮັບປະກັນການຄຸ້ມຄອງເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃຫ້ນຳໃຊ້ເງິນຕາຕ່າງປະເທດ ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;

3. ຮັບປະກັນການນຳໃຊ້ເງິນຕາຕ່າງປະເທດ ຂອງວິສາຫະກິດ ແລະ ການຈັດຕັ້ງ ທີ່ມີການເຄື່ອນໄຫວລະຫວ່າງປະເທດ ໃຫ້ສອດຄ່ອງກັບຄຸນລັກສະນະຂອງແຕ່ລະກິດຈະການ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວຂ້ອງກັບການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ.

## ໝວດທີ 2
## ອົງປະກອບການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ

**ມາດຕາ 5 ອົງປະກອບການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ**

ການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ມີອົງປະກອບ ດັ່ງນີ້:

1. ການກຳນົດມູນຄ່າ, ຕິດປະກາດ ແລະ ໂຄສະນາ;
2. ການຊຳລະ ແລະ/ຫຼື ຮັບຊຳລະ;
3. ການກຳນົດໂຄງສ້າງລາຄາ.

**ມາດຕາ 6 ການກຳນົດມູນຄ່າ, ຕິດປະກາດ ແລະ ໂຄສະນາ**

ເປົ້າໝາຍນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ທີ່ໄດ້ຮັບອະນຸຍາດໃຫ້ກຳນົດມູນຄ່າ, ຕິດປະກາດ ແລະ ໂຄສະນາ ຄ່າສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ ເປັນເງິນຕາຕ່າງປະເທດ ຕ້ອງເອົາເງິນກີບ ເປັນຫຼັກ ແລະ ເງິນຕາຕ່າງປະເທດ ເປັນສຳຮອງ.

ນອກຈາກເປົ້າໝາຍທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ໃຫ້ກຳນົດມູນຄ່າ, ຕິດປະກາດ ແລະ ໂຄສະນາ ຄ່າສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ ເປັນເງິນກີບ ເທົ່ານັ້ນ.

**ມາດຕາ 7 ການຊຳລະ ແລະ/ຫຼື ຮັບຊຳລະ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດຊຳລະ ແລະ/ຫຼື ຮັບຊຳລະ ຄ່າສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ ກັບເປົ້າໝາຍນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ເຂົ້າໃນກິດຈະການໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຄ່າສິນຄ້າ ແລະ ຄ່າບໍລິການ ຂອງວິສາຫະກິດ ທີ່ຕັ້ງຢູ່ ດ່ານຊາຍແດນ ແລະ ດ່ານສະໜາມບິນສາກົນ ຂາອອກໄປຕ່າງປະເທດ;

2. ຄ່າສິນຄ້າ ແລະ ຄ່າບໍລິການ ທີ່ສະໜອງໃຫ້ຜູ້ສົ່ງອອກ ຊຶ່ງມີລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກ (Global Supply Chain);

3. ຄ່າວີຊາ, ຄ່າທໍານຽມ, ຄ່າບໍລິການ, ພັນທະຕໍ່ລັດ ທີ່ກ່ຽວຂ້ອງກັບການເຂົ້າ-ອອກ ສປປ ລາວ;

4. ຄ່າຂົນສົ່ງສິນຄ້າ ແລະ ປີ້ໂດຍສານ ລະຫວ່າງປະເທດ;

5. ຄ່າບໍລິການສາງສິນຄ້າ ສໍາລັບສິນຄ້ານໍາເຂົ້າ-ສົ່ງອອກ ຢູ່ດ່ານຊາຍແດນ ແລະ ດ່ານສະໜາມບິນສາກົນ;

6. ຄ່າບໍລິການຂອງທ່າບົກ ເປັນຕົ້ນ ສາງສິນຄ້າ, ຄ່າຂົນຖ່າຍສິນຄ້າ, ຂົນສົ່ງສິນຄ້າ, ລານຕູ້ສິນຄ້າ, ສ້ອມແປງລົດຂົນສົ່ງ, ຕູ້ສິນຄ້າ, ຫຸ້ມຫໍ່, ຂ້າເຊື້ອພະຍາດ;

7. ຄ່າທໍານຽມ, ຄ່າບໍລິການ, ດອກເບ້ຍ ແລະ ຄ່າອື່ນ ທີ່ກ່ຽວຂ້ອງກັບການດໍາເນີນທຸລະກໍາເປັນເງິນຕາຕ່າງປະເທດ ກັບທະນາຄານທຸລະກິດ;

8. ຄ່າປະກັນໄພກັບຕ່າງປະເທດ ເປັນຕົ້ນ ປະກັນໄພການເດີນທາງ, ປະກັນໄພໂຄງການຢູ່ຕ່າງປະເທດ, ປະກັນໄພການຂົນສົ່ງ ແລະ ປະກັນໄພຕໍ່ (Reinsurance);

9. ຄ່າພັກແຮມ, ຄ່າບໍລິການທ່ອງທ່ຽວລະຫວ່າງປະເທດ;

10. ຄ່າບໍລິການຂອງທຸລະກິດກາຊີໂນ;

11. ການປະຕິບັດພັນທະຕໍ່ລັດ ຂອງວິສາຫະກິດ ທີ່ມີການສົ່ງອອກສິນຄ້າ ຫຼື ການບໍລິການ, ຜູ້ທີ່ໄດ້ເຊົ່າ ຫຼື ສໍາປະທານ ຈາກລັດຖະບານ ຊຶ່ງມີລາຍຮັບເປັນເງິນຕາຕ່າງປະເທດ;

12. ການປະຕິບັດວຽກງານນະໂຍບາຍການເງິນ-ເງິນຕາ;

13. ການໃຫ້ເງິນຊ່ວຍເຫຼືອລ້າ;

14. ມູນຄ່າໂຄງການປະມູນ ຂອງການປະມູນເປີດກວ້າງສາກົນ;

15. ຄ່າອື່ນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 8 ການກໍານົດໂຄງສ້າງລາຄາ**

ສິນຄ້າ ແລະ ການບໍລິການ ທີ່ນໍາເຂົ້າຈາກຕ່າງປະເທດ ສາມາດກໍານົດໂຄງສ້າງລາຄາ ເປັນເງິນຕາຕ່າງປະເທດ, ແຕ່ຕ້ອງກໍານົດມູນຄ່າ, ຕິດປະກາດ ແລະ ໂຄສະນາ ສອດຄ່ອງກັບມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລະ ນໍາໃຊ້ອັດຕາແລກປ່ຽນຂອງທະນາຄານທຸລະກິດ.

ສໍາລັບ ສິນຄ້າ ແລະ ການບໍລິການ ທີ່ບໍ່ໄດ້ນໍາເຂົ້າຈາກຕ່າງປະເທດ ຫຼື ບໍ່ມີປັດໄຈການຜະລິດນໍາເຂົ້າຈາກຕ່າງປະເທດ ຕ້ອງກໍານົດໂຄງສ້າງລາຄາເປັນເງິນກີບ ເທົ່ານັ້ນ.

ຫຼັກການ ແລະ ລະບຽບການ ຂອງການນໍາໃຊ້ເງິນຕາຕ່າງປະເທດເຂົ້າໃນການກໍານົດໂຄງສ້າງລາຄາ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 9 ການແລກປ່ຽນເງິນຕາ ແລະ ອັດຕາແລກປ່ຽນ**

ການແລກປ່ຽນເງິນຕາຕ່າງປະເທດ ຕ້ອງດໍາເນີນຢູ່ທະນາຄານທຸລະກິດ ແລະ/ຫຼື ຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ອັດຕາແລກປ່ຽນ ທີ່ນຳໃຊ້ເຂົ້າໃນການ ກຳນົດມູນຄ່າ, ຕິດປະກາດ, ໂຄສະນາ, ຊຳລະ, ຮັບຊຳລະ ແລະ ກຳນົດໂຄງສ້າງລາຄາ ເປັນເງິນຕາຕ່າງປະເທດ ໃຫ້ນຳໃຊ້ອັດຕາແລກປ່ຽນ ຂອງທະນາຄານທຸລະກິດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 3
## ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ

### ມາດຕາ 10 ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ

ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ແມ່ນ ຫົວໜ່ວຍທີ່ດຳເນີນທຸລະກິດ ລະຫວ່າງປະເທດ ຫຼື ການຈັດຕັ້ງທີ່ມີການເຄື່ອນໄຫວລະຫວ່າງປະເທດ ຊຶ່ງປະກອບດ້ວຍ:

1. ເປົ້າໝາຍທີ່ສາມາດປະຕິບັດໄດ້ທັນທີ;
2. ເປົ້າໝາຍທີ່ຕ້ອງຂໍອະນຸຍາດ.

### ມາດຕາ 11 ເປົ້າໝາຍທີ່ສາມາດປະຕິບັດໄດ້ທັນທີ

ເປົ້າໝາຍທີ່ສາມາດປະຕິບັດໄດ້ທັນທີ ແມ່ນ ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໂດຍບໍ່ຕ້ອງຂໍອະນຸຍາດ ແລະ ສາມາດນຳໃຊ້ເງິນຕາຕ່າງປະເທດ ໃນຂອບເຂດ ດັ່ງນີ້:

1. ຂະແໜງການຂອງລັດ ສາມາດອອກເຄື່ອງມືນະໂຍບາຍການເງິນ-ເງິນຕາ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ-ເງິນຕາ;
2. ຂະແໜງການຂອງລັດ ສາມາດ ໃຫ້ ຫຼື ຮັບ ເງິນຊ່ວຍເຫຼືອລ້າ ໂດຍຜ່ານທະນາຄານທຸລະກິດ;
3. ຂະແໜງການຂອງລັດ ຫຼື ວິສາຫະກິດ ທີ່ຈັດເກັບລາຍຮັບງົບປະມານແຫ່ງລັດປະຈຳຢູ່ ດ່ານຊາຍແດນ, ດ່ານສະໜາມບິນສາກົນ ສາມາດຮັບຊຳລະ ຄ່າວີຊ່າ, ຄ່າທຳນຽມ, ຄ່າບໍລິການ, ພັນທະຕໍ່ລັດ ທີ່ກ່ຽວຂ້ອງກັບການເຂົ້າ-ອອກ ສປປ ລາວ;
4. ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ ແລະ ສະຖານກົງສຸນ ຂອງຕ່າງປະເທດ ສາມາດຮັບຊຳລະ, ກຳນົດມູນຄ່າ ແລະ ຕິດປະກາດ ຄ່າວີຊ່າ, ຄ່າທຳນຽມ, ຄ່າບໍລິການ ທີ່ກ່ຽວຂ້ອງກັບການເດີນທາງເຂົ້າປະເທດຂອງຕົນ;
5. ທະນາຄານທຸລະກິດ ສາມາດກຳນົດມູນຄ່າ, ຕິດປະກາດ, ໂຄສະນາ, ຊຳລະ ແລະ ຮັບຊຳລະ ຄ່າທຳນຽມ, ຄ່າບໍລິການ, ດອກເບ້ຍ ແລະ ຄ່າອື່ນ ໃນຂອບເຂດການເຄື່ອນໄຫວທຸລະກິດຂອງຕົນ;
6. ວິສາຫະກິດທີ່ດຳເນີນທຸລະກິດໃຫ້ບໍລິການສະຖານທີ່ພັກແຮມ ເປັນຕົ້ນ ໂຮງແຮມ, ຣີສອດ, ເຮືອນພັກ ສາມາດຕິດປະກາດ ແລະ ໂຄສະນາ ຄ່າພັກແຮມ ຜ່ານສື່ໂຄສະນາອອນລາຍຂອງຕົນທີ່ໃຊ້ພາສາຕ່າງປະເທດ ແລະ ສາມາດຮັບຊຳລະ ຄ່າພັກແຮມດັ່ງກ່າວ ດ້ວຍເຄື່ອງມືການຊຳລະທາງເອເລັກໂຕຣນິກ ມາແຕ່ຕ່າງປະເທດ ເຂົ້າບັນຊີເງິນຝາກເງິນຂອງຕົນ ທີ່ເປີດກັບທະນາຄານທຸລະກິດຢູ່ ສປປ ລາວ;
7. ໂຄງການປະມູນເປີດກວ້າງສາກົນ ສາມາດກຳນົດມູນຄ່າ, ຊຳລະ ແລະ ຮັບຊຳລະ ມູນຄ່າໂຄງການ.

### ມາດຕາ 12 ເປົ້າໝາຍທີ່ຕ້ອງຂໍອະນຸຍາດ

ເປົ້າໝາຍທີ່ຕ້ອງຂໍອະນຸຍາດ ແມ່ນ ເປົ້າໝາຍທີ່ມີຈຸດປະສົງນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ຊຶ່ງຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ ເພື່ອນຳໃຊ້ເງິນຕາຕ່າງປະເທດ ໃນຂອບເຂດ ດັ່ງນີ້:

1. ວິສາຫະກິດ ທີ່ມີການສົ່ງອອກສິນຄ້າ ຫຼື ການບໍລິການ, ຜູ້ທີ່ໄດ້ ເຊົ່າ ຫຼື ສໍາປະທານ ຈາກລັດຖະບານ ຊຶ່ງມີລາຍຮັບເປັນເງິນຕາຕ່າງປະເທດ ທີ່ມີຈຸດປະສົງປະຕິບັດພັນທະຕໍ່ລັດ ໂດຍດໍາເນີນຜ່ານທະນາຄານທຸລະກິດ.

2. ວິສາຫະກິດທີ່ໃຫ້ບໍລິການຂົນສົ່ງສິນຄ້າ ແລະ ໂດຍສານ ລະຫວ່າງປະເທດ ລວມທັງ ຕົວແທນໃຫ້ບໍລິການດັ່ງກ່າວ ແລະ ວິສາຫະກິດທີ່ໃຫ້ບໍລິການສາງສິນຄ້າ ຢູ່ດ່ານຊາຍແດນ ແລະ ດ່ານສະໜາມບິນສາກົນ ໃນຂອບເຂດ ດັ່ງນີ້:

2.1. ຕິດປະກາດ ແລະ ໂຄສະນາ ຄ່າຂົນສົ່ງສິນຄ້າ ແລະ ປີ້ໂດຍສານ ລະຫວ່າງປະເທດ ຜ່ານຊ່ອງທາງໂຄສະນາອອນລາຍຂອງຕົນທີ່ເປັນພາສາຕ່າງປະເທດ;

2.2. ກໍານົດມູນຄ່າໃນເອກະສານການ ຊື້ ຂາຍ ກ່ຽວກັບການຂົນສົ່ງສິນຄ້າ ແລະ ປີ້ໂດຍສານລະຫວ່າງປະເທດ ຫຼື ບໍລິການສາງສິນຄ້າ ຢູ່ດ່ານຊາຍແດນ;

2.3. ຮັບຊໍາລະ ຄ່າຂົນສົ່ງສິນຄ້າ ແລະ ປີ້ໂດຍສານ ລະຫວ່າງປະເທດ ໂດຍດໍາເນີນຜ່ານທະນາຄານທຸລະກິດ;

2.4. ຮັບຊໍາລະຄ່າບໍລິການສາງສິນຄ້າ ສໍາລັບສິນຄ້ານໍາເຂົ້າ ແລະ ສົ່ງອອກ ເປັນຕົ້ນ ບໍລິການຝາກສາງ, ປ່ຽນຖ່າຍສິນຄ້າ ໂດຍຜ່ານທະນາຄານທຸລະກິດ.

3. ວິສາຫະກິດທີ່ຕັ້ງຢູ່ດ່ານຊາຍແດນ ແລະ ສະໜາມບິນສາກົນ ຂາອອກໄປຕ່າງປະເທດ ເປັນຕົ້ນຮ້ານຄ້າປອດພາສີ, ຮ້ານອາຫານ, ຮ້ານຂາຍເຄື່ອງ ນໍາໃຊ້ເງິນຕາຕ່າງປະເທດພາຍໃນສະຖານທີ່ດໍາເນີນທຸລະກິດຂອງຕົນ ໃນຂອບເຂດ ດັ່ງນີ້:

3.1. ຕິດປະກາດ ແລະ ໂຄສະນາ ຄ່າສິນຄ້າ ແລະ ການບໍລິການ ທີ່ເປັນພາສາຕ່າງປະເທດ;

3.2. ກໍານົດມູນຄ່າໃນເອກະສານການ ຊື້ ຂາຍ ສິນຄ້າ ແລະ ການບໍລິການ;

3.3. ຮັບຊໍາລະ ຄ່າສິນຄ້າ ແລະ ການບໍລິການ.

4. ກິດຈະການທ່າບົກລະຫວ່າງປະເທດ ທີ່ໃຫ້ບໍລິການ ສາງສິນຄ້າ, ຄ່ຽນຖ່າຍສິນຄ້າ, ຂົນສົ່ງສິນຄ້າ, ລານຕູ້ສິນຄ້າ, ສ້ອມແປງລົດຂົນສົ່ງ, ຕູ້ສິນຄ້າ, ຫຸ້ມຫໍ່, ຂ້າເຊື້ອພະຍາດ ໃນຂອບເຂດ ດັ່ງນີ້:

4.1. ຕິດປະກາດລາຄາ ແລະ ໂຄສະນາ ຄ່າບໍລິການຂອງທ່າບົກ ຜ່ານສື່ຊ່ອງທາງໂຄສະນາອອນລາຍຂອງຕົນທີ່ເປັນພາສາຕ່າງປະເທດ;

4.2. ກໍານົດມູນຄ່າໃນເອກະສານການ ຊື້ ຂາຍ ຄ່າບໍລິການຂອງທ່າບົກ;

4.3. ຮັບຊໍາລະຄ່າບໍລິການຂອງທ່າບົກ ໂດຍດໍາເນີນຜ່ານທະນາຄານທຸລະກິດ.

5. ວິສາຫະກິດ ທີ່ມີພັນທະຊໍາລະເປັນເງິນຕາຕ່າງປະເທດກັບຕ່າງປະເທດ ແລະ ເປັນຜູ້ສະໜອງສິນຄ້າ ແລະ ການບໍລິການ ໃຫ້ຜູ້ສົ່ງອອກທີ່ມີລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກ ໃນຂອບເຂດ ດັ່ງນີ້:

5.1. ກໍານົດມູນຄ່າໃນເອກະສານການ ຊື້ ຂາຍ ສິນຄ້າ ແລະ ການບໍລິການ;

5.2. ຮັບຊໍາລະຄ່າສິນຄ້າ ແລະ ການບໍລິການ ໂດຍດໍາເນີນຜ່ານທະນາຄານທຸລະກິດ.

6. ວິສາຫະກິດ ທີ່ເຄື່ອນໄຫວທຸລະກິດປະກັນໄພກັບຕ່າງປະເທດ ເປັນຕົ້ນ ປະກັນໄພການເດີນທາງ, ປະກັນໄພໂຄງການຢູ່ຕ່າງປະເທດ, ປະກັນໄພການຂົນສົ່ງ ແລະ ປະກັນໄພຕໍ່ ໃນຂອບເຂດ ດັ່ງນີ້:

6.1. ກໍານົດມູນຄ່າໃນເອກະສານການ ຊື້ ຂາຍ ປະກັນໄພ;

6.2. ຮັບຊໍາລະ ຄ່າປະກັນໄພ ເປັນເງິນຕາຕ່າງປະເທດ ໂດຍຜ່ານລະບົບທະນາຄານ.

7. ວິສາຫະກິດນຳທ່ຽວລະຫວ່າງປະເທດ ເຄື່ອນໄຫວ ໃນຂອບເຂດ ດັ່ງນີ້:

7.1. ຕິດປະກາດ ແລະ ໂຄສະນາ ບໍລິການທ່ອງທ່ຽວ ໃນຂອບເຂດສະຖານທີ່ດຳເນີນທຸລະກິດ ແລະ ຜ່ານສື່ໂຄສະນາອອນລາຍຂອງຕົນທີ່ເປັນພາສາຕ່າງປະເທດ;

7.2. ກຳນົດມູນຄ່າໃນເອກະສານຄ່າບໍລິການທ່ອງທ່ຽວ;

7.3. ຮັບຊຳລະ ຄ່າບໍລິການທ່ອງທ່ຽວ ຜ່ານທະນາຄານທຸລະກິດ.

8. ວິສາຫະກິດທີ່ດຳເນີນທຸລະກິດກາຊິໂນ ຮັບຊຳລະຄ່າບໍລິການ ໃນຂອບເຂດການເຄື່ອນໄຫວທຸລະກິດຂອງຕົນ.

9. ເປົ້າໝາຍອື່ນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

## ໝວດທີ 4
## ການຂໍອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ

### ມາດຕາ 13 ການຂໍອະນຸຍາດ

ເປົ້າໝາຍທີ່ຕ້ອງຂໍອະນຸຍາດ ທີ່ມີຈຸດປະສົງນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ຕ້ອງຍື່ນໜັງສືສະເໜີ ແລະ ເອກະສານປະກອບ ຂໍອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ຕໍ່ກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ຕາມສະຖານທີ່ຕັ້ງທຸລະກິດ ຫຼື ສຳນັກງານ ຂອງຕົນ.

### ມາດຕາ 14 ເອກະສານປະກອບຂໍອະນຸຍາດ

ເອກະສານປະກອບຂໍອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ມີດັ່ງນີ້:

1. ໜັງສືສະເໜີ ພ້ອມດ້ວຍເຫດຜົນຄວາມຈຳເປັນ;

2. ສຳເນົາໃບທະບຽນວິສາຫະກິດ;

3. ສຳເນົາໃບອະນຸຍາດລົງທຶນ ແລະ/ຫຼື ໃບອະນຸຍາດດຳເນີນທຸລະກິດ (ຖ້າມີ);

4. ໃບຢັ້ງຢືນການມອບອາກອນປີຫຼ້າສຸດ (ຖ້າມີ);

5. ແຜນລາຍຮັບ-ລາຍຈ່າຍ ເປັນ ເງິນກີບ, ເງິນຕາຕ່າງປະເທດ ແລະ ແຜນການແລກປ່ຽນເງິນຕາກັບທະນາຄານທຸລະກິດ ໃນໄລຍະ ໜຶ່ງ ປີ;

6. ເອກະສານອື່ນ ຕາມການຮຽກຮ້ອງຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ.

ເອກະສານປະກອບຂໍຕໍ່ໃບອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ມີ ດັ່ງນີ້:

1. ໜັງສືສະເໜີ ແຈ້ງເຫດຜົນຄວາມຈຳເປັນ;

2. ໃບຢັ້ງຢືນການມອບອາກອນປີຫຼ້າສຸດ;

3. ແຜນລາຍຮັບ-ລາຍຈ່າຍ ເປັນ ເງິນກີບ, ເງິນຕາຕ່າງປະເທດ ແລະ ແຜນການແລກປ່ຽນເງິນຕາກັບທະນາຄານ ໃນໄລຍະ ໜຶ່ງ ປີ ແລະ ສຳເນົາຢັ້ງຢືນຫຼັກຖານ ການແລກປ່ຽນເງິນຕາກັບທະນາຄານທຸລະກິດ;

4. ເອກະສານການເຄື່ອນໄຫວບັນຊີສຳຮອງ (Bank statement) ທີ່ເປັນບັນຊີເງິນຝາກສະເພາະຮອງຮັບການຊຳລະເປັນເງິນຕາຕ່າງປະເທດ ໄລຍະ ໜຶ່ງ ປີ ຜ່ານມາ;

5. ເອກະສານອື່ນ ຕາມການຮຽກຮ້ອງຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ.

**ມາດຕາ 15 ການພິຈາລະນາ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ພິຈາລະນາກ່ຽວກັບການ ອອກ ແລະ ຕໍ່ ໃບອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ພາຍໃນເວລາ ສິບ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ໃນກໍລະນີປະຕິເສດຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ຜູ້ໄດ້ຮັບໃບອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ຕ້ອງມາຮັບເອົາໃບອະນຸຍາດພາຍໃນສິບ ວັນລັດຖະການ. ໃນກໍລະນີເກີນກຳນົດເວລາດັ່ງກ່າວໃບອະນຸຍາດແມ່ນຖືກຍົກເລີກ.

**ມາດຕາ 16 ໃບອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ**

ໃບອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ມີອາຍຸການນຳໃຊ້ ໜຶ່ງ ປີ ນັບແຕ່ວັນທີ່ໄດ້ອອກໃບອະນຸຍາດເປັນຕົ້ນໄປ. ໃບອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ບໍ່ສາມາດໂອນ ຫຼື ມອບໃຫ້ຜູ້ອື່ນນຳໃຊ້.

ຜູ້ທີ່ມີຈຸດປະສົງ ຕໍ່ໃບອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ຕ້ອງສະເໜີກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ພາຍໃນເວລາ ສາມສິບ ວັນ ກ່ອນໝົດອາຍຸການນຳໃຊ້ ໂດຍປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 17 ຄ່າທຳນຽມ**

ຜູ້ທີ່ໄດ້ຮັບໃບອະນຸຍາດ ແລະ ຕໍ່ໃບອະນຸຍາດ ນຳໃຊ້ເງິນຕາຕ່າງປະເທດຢູ່ ສປປ ລາວ ຕ້ອງເສຍຄ່າທຳນຽມ ໃນການອອກ ແລະ ຕໍ່ໃບອະນຸຍາດ ຈຳນວນ 1,000,000 (ໜຶ່ງລ້ານ) ກີບ ພາຍໃນວັນທີ່ມາຮັບໃບອະນຸຍາດດັ່ງກ່າວ.

## ໝວດທີ 5
## ສິດ ແລະ ໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ນິຕິກຳ ກ່ຽວກັບການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ເພື່ອສະເໜີຄະນະຜູ້ວ່າການ ພິຈາລະນາ;

2. ຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ;

3. ຄົ້ນຄວ້າກຳນົດອັດຕາສ່ວນ ການຂາຍເງິນຕາຕ່າງປະເທດ ຂອງເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃຫ້ທະນາຄານທຸລະກິດ;

4. ຕິດຕາມ ແລະ ກວດກາ ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

5. ພິຈາລະນາ ອອກ ແລະ ຕໍ່ ໃບອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

6. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນ ກ່ຽວກັບເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ;

7. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການ ຕິດຕາມ ກວດກາ ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ;

8. ນຳໃຊ້ມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້ ໃນຂອບເຂດສິດຂອງຕົນ;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃຫ້ຄະນະຜູ້ວ່າການ ຢ່າງເປັນປົກກະຕິ;

10. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ**

ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດການຄຸ້ມຄອງຂອງຕົນ;

2. ພິຈາລະນາ ອອກ ແລະ ຕໍ່ ໃບອະນຸຍາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

3. ຕິດຕາມ ແລະ ກວດກາ ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

4. ນຳໃຊ້ມາດຕະການຕໍ່ຜູ້ລະທີ່ລະເມີດຂໍ້ຕົກລົງສະບັບນີ້ ໃນຂອບເຂດສິດຂອງຕົນ;

5. ສະຫຼຸບ ແລະ ລາຍງານ ກ່ຽວກັບເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃຫ້ກົມຄຸ້ມຄອງເງິນຕາຕ່າງປະເທດ ໃນແຕ່ລະໄລຍະ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ**

ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳໃຊ້ເງິນຕາຕ່າງປະເທດ ໃນຂອບເຂດທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

2. ເປີດບັນຊີເງິນຝາກສະເພາະກັບທະນາຄານທຸລະກິດ ເພື່ອຮອງຮັບການຊຳລະ ເປັນເງິນຕາຕ່າງປະເທດ ສຳລັບວິສາຫະກິດ;

3. ນຳລາຍຮັບເງິນຕາຕ່າງປະເທດທີ່ເປັນເງິນສົດໃນແຕ່ລະວັນ ເຂົ້າບັນຊີເງິນຝາກ ຊຶ່ງເປີດໄວ້ກັບທະນາຄານທຸລະກິດ ພາຍໃນວັນລັດຖະການຖັດໄປ;

4. ຂາຍເງິນຕາຕ່າງປະເທດໃຫ້ທະນາຄານທຸລະກິດ ຕາມອັດຕາສ່ວນທີ່ກົມຄຸ້ມຄອງເງິນຕາຕ່າງປະເທດ ກຳນົດໃນແຕ່ລະໄລຍະ ສຳລັບວິສາຫະກິດ;

5. ສະໜອງ ຂໍ້ມູນ, ເອກະສານ ກ່ຽວຂ້ອງກັບການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ຕາມການຮຽກຮ້ອງຂອງທະນາຄານແຫ່ງ ສປປ ລາວ;

6. ມີຄວາມຮັບຜິດຊອບອື່ນ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

## ໝວດທີ 6
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 21 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຊຳລະເປັນເງິນຕາຕ່າງປະເທດ ໃຫ້ເປົ້າໝາຍນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ດ້ວຍຈຸດປະສົງການຊຳລະ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

2. ນຳໃຊ້ເງິນຕາຕ່າງປະເທດເຂົ້າໃນການ ກຳນົດມູນຄ່າ, ຕິດປະກາດ ແລະ/ຫຼື ໂຄສະນາ ລາຄາສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ, ກຳນົດໂຄງສ້າງລາຄາ ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ເປັນເງິນຕາຕ່າງປະເທດ ກັບເປົ້າໝາຍນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ໂດຍບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 22 ຂໍ້ຫ້າມສຳລັບເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ**

ຫ້າມເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ເງິນຕາຕ່າງປະເທດ ໂດຍບໍ່ສອດຄ່ອງກັບຂອບເຂດທີ່ໄດ້ຮັບອະນຸຍາດ;

2. ກຳນົດ ແລະ ຕິດປະກາດ ອັດຕາແລກປ່ຽນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

3. ຊຳລະຄ່າ ສິນຄ້າ, ການບໍລິການ ແລະ ຄ່າອື່ນ ຢູ່ພາຍໃນ ແລະ ລະຫວ່າງປະເທດ ເປັນເງິນຕາຕ່າງປະເທດ ດ້ວຍການນຳໃຊ້ລະບົບການຊຳລະທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

4. ປະຕິເສດ ຫຼື ຫຼີກຫຼ່ຽງ ການຂາຍເງິນຕາຕ່າງປະເທດຂອງຕົນ ໃຫ້ທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 23 ມາດຕະການສຶກສາອົບຮົມ**

ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ຊຶ່ງລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກກ່າວເຕືອນ ຢ່າງເປັນລາຍລັກອັກສອນ.

**ມາດຕາ 24 ມາດຕະການປັບໃໝທາງບໍລິຫານ**

ເປົ້າໝາຍທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝທາງບໍລິຫານ ໃນແຕ່ລະກໍລະນີ ດັ່ງນີ້:

1. ຖືກປະຕິບັດມາດຕະການສຶກສາອົບຮົມ ແຕ່ຍັງສືບຕໍ່ລະເມີດ ຈະຖືກປັບໃໝ ແຕ່ 10,000,000 (ສິບລ້ານ) ກີບ ຫາ 20,000,000 (ຊາວລ້ານ) ກີບ ສໍາລັບການລະເມີດທີ່ບໍ່ສາມາດກໍານົດມູນຄ່າ ຫຼື ການລະເມີດທີ່ມີມູນຄ່າຕໍ່າກວ່າ 100,000,000 (ໜຶ່ງຮ້ອຍລ້ານ) ກີບ ຫຼື ທຽບເທົ່າ;

2. ຖືກປະຕິບັດມາດຕະການສຶກສາອົບຮົມ ແຕ່ຍັງສືບຕໍ່ລະເມີດ ຈະຖືກປັບໃໝ ຫ້າສ່ວນຮ້ອຍ (5%) ຂອງມູນຄ່າທີ່ລະເມີດ ແຕ່ບໍ່ຫຼຸດ 20,000,000 (ຊາວລ້ານ) ກີບ ສໍາລັບການລະເມີດທີ່ມີມູນຄ່າແຕ່ 100,000,000 (ໜຶ່ງຮ້ອຍລ້ານ) ກີບ ຂຶ້ນໄປ ຫຼື ທຽບເທົ່າ;

3. ລະເມີດຄັ້ງທໍາອິດ ທີ່ມີມູນຄ່າແຕ່ 100,000,000 (ໜຶ່ງຮ້ອຍລ້ານ) ກີບ ຂຶ້ນໄປ ຫຼື ທຽບເທົ່າ ຈະຖືກປັບໃໝ ສາມສ່ວນຮ້ອຍ (3%) ຂອງມູນຄ່າທີ່ລະເມີດ ແຕ່ບໍ່ຫຼຸດ 15,000,000 (ສິບຫ້າລ້ານ) ກີບ.

ສໍາລັບການລະເມີດຊໍ້າໃນແຕ່ລະກໍລະນີ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ.

**ມາດຕາ 25 ມາດຕະການທາງບໍລິຫານອື່ນ**

ເປົ້າໝາຍທີ່ໄດ້ຮັບອະນຸຍາດ ຈາກກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ທີ່ຖືກປັບໃໝຕາມມາດຕາ 24 ຂອງຂໍ້ຕົກລົງສະບັບນີ້ ສອງ ຄັ້ງ ແຕ່ຍັງສືບຕໍ່ລະເມີດ ຈະຖືກຖອນ ຫຼື ປະຕິເສດການຕໍ່ ໃບອະນຸຍາດນໍາໃຊ້ເງິນຕາຕ່າງປະເທດຢູ່ ສປປ ລາວ ພ້ອມທັງແຈ້ງໃຫ້ມວນຊົນຊາບ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 26 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ເປັນເຈົ້າການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ເປົ້າໝາຍທີ່ສາມາດນໍາໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 27 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ອາລຸນ ບຸນຍົງ**